**ແຂວງ ຫຼວງນໍ້າທາ**

**ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນແຂວງ**

**ກອງທຶນຫລຸດຜ່ອນຄວາມທຸກຍາກ**

**-----------------------------------------**

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ ເມສາ2014)

**ທີມງານບໍລິຫານ ທລຍ ຂັ້ນແຂວງ**

**ກະກຽມໂດຍ:ທີມງານ ຕິດຕາມ -ປະເມີນຜົນ**

**ເມສາ 2014**

**ສາລະບານ**

1. ພາກສະເໜີ. ....................................................................................................................1

2. ສະພາບລວມຂອງການຈັດຕັ້ງປະຕິບັດໂຄງການໃນໜຶ່ງເດືອນຜ່ານມາ. ..............................................2

   2.1. ຄວາມຄືບໜ້າດ້ານໂຄງການຍ່ອຍ (ແຍກຕາມອົງປະກອບ ແລະ ແຫຼ່ງທຶນ)....................2

   2.2. ຄວາມຄືບໜ້າດ້ານໂຄງການຍ່ອຍ (ແຍກຕາມອົງປະກອບ ແລະ ແຫຼ່ງທຶນ)....................2

   2.3. ຄວາມຄືບໜ້າດ້ານການເງິນ(ແຍກຕາມອົງປະກອບແລະການນຳໃຊ້ເງິນແຕ່ລະແຫຼ່ງທຶນ)...........2

   2.4. ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ..............3

3. ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຂອງແຕ່ລະໜ່ວຍງານ. ..................3

   3.1. ໜ່ວຍງານພັດທະນາຊຸມຊົນ....................................3-5

   3.2. ໜ່ວຍງານຈັດຊື້-ຈັດຈ້າງ........................................6

   3.3. ໜ່ວຍງານບໍລິຫານການເງິນ....................................7

   3.4. ໜ່ວຍງານວິສະວະກຳ.........................................7

   3.5. ໜ່ວຍງານຕິດຕາມ-ປະເມີນຜົນ....................................8

   3.6.ວຽກງານອື່ນໆ. ..........................................8

4. ຂໍ້ສັງເກດ. ..........................................8

   4.1. ຈຸດດີ. ..........................................8

   4.2. ຂໍ້ຄົງຄ້າງ. ..........................................8

   4.3.ວິທີແກ້ໄຂ. ..........................................9

   4.4.ບົດຮຽນຖອດຖອນໄດ້. ..................................9

   4.5.ຂໍ້ສະເໜີ.............................................9

5. ແຜນວຽກໃນຕໍ່ໜ້າ (ເດືອນ). ....................................9-10

# ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທລຍ ແຕ່ວັນທີ 1-30 / 04/2014

## 1. ພາກສະເໜີ

ກອງທຶນຫລຸດຜ່ອນຄວາມທຸກຍາກແຂວງ ຫຼວງນ້ຳທາ ໄດ້ສ້າງຂຶ້ນ ແລະ ເລີ່ມຈັດຕັ້ງປະຕິບັດມາແຕ່ ເດືອນ 6/2008 ເປັນໄລຍະທີ່ໜຶ່ງ ( PRF I ). ກວມເອົາ 3 ເມືອງ, 29 ກຸ່ມບ້ານ ແລະ 186 ບ້ານ, ປະກອບມີພົນລະເມືອງທັງໝົດ 73,384 ຄົນ, ໃນນັ້ນມີເພດຍິງ 36,945 ຄົນ ຫຼື ເທົ່າກັບ 50,34% ແລະ ໄລຍະທີ່ສອງ( PRF II ) ເລີ່ມແຕ່ປີ 2012-2016 ແມ່ນຈະຈັດຕັ້ງປະຕິບັດຢູ່ 3 ເມືອງ, ກວມເອົາ 17 ກຸ່ມບ້ານ ແລະ 102 ບ້ານ, ປະກອບມີພົນລະເມືອງທັງໝົດ 36,680 ຄົນ,ໃນນັ້ນມີເພດຍິງ 18,448 ຄົນ ຫຼື ເທົ່າກັບ 50,29% ມີ 6,201 ຄອບຄົວ, ຈຳນວນຄົນທຸກ14,755 ຄົນ, ເດັກນ້ອຍ <15 ປີ 13,462 ຄົນ.

ໃນສົກປີ 2011-2012 (ຮອບວຽນທີ 9) ທລຍ ແຂວງ ຫຼວງນ້ຳທາໄດ້ຮັບນຸມັດໂຄງການທີ່ກຳລັງຈັດຕັ້ງປະຕິບັດມີທັງໝົດ42ໂຄງການຊຶ່ງນຳໃຊ້ທຶນທັງໝົດ7,541,643,220ກີບ,ໃນນັ້ນທຶນປະກອບສ່ວນຂອງຊຸມຊົນມີມູນຄ່າ 649,262,000ກີບ,ທຶນຂອງSDC=19 ໂຄງການງົບປະມານເທົ່າກັບມູນຄ່າ2,995,382,068ກີບ, ທຶນຂອງ LUFSIP=17ໂຄງການ,ມູນຄ່າ1,955,821,571ກີບ. ທຶນຂອງIDA = 6ໂຄງການ, ມູນຄ່າ1,941,177,581ກີບ.(ລາຍລະອຽດມີຕາຕະລາງຊ້ອນທ້າຍ)

ໃນສົກປີ 2012-2013(ຮອບວຽນທີ 10) ທລຍແຂວງຫຼວງນ້ຳທາໄດ້ຮັບປະນຸມັດໃຫ້ຈັດຕັ້ງປະຕິບັດໂຄງການທັງໝົດ 29 ໂຄງການຊຶ່ງມີມູນຄ່າທັງໝົດ4.975.675.977ກີບ,ໃນນັ້ນທຶນປະກອບສ່ວນຂອງຊຸມຊົນມີມູນຄ່າ 607,963,408ກີບ,ທຶນຂອງSDC-Waterມີ06ໂຄງການທຽບເທົ່າມູນຄ່າ671,139,619ກີບ,ທຶນຂອງIDAມີ5ໂຄງການມູນຄ່າ876,202,546ກີບແລະທຶນສົມທົບຈາກລັດຖະບານ+ເຮເວີຕູ໊ດຈຳນວນ18ໂຄງການມູນຄ່າ2,820,370,404ກີບ. (ລາຍລະອຽດມີຕາຕະລາງຊ້ອນທ້າຍ)

ໃນສົກປີ2013-2014(ຮອບວຽນທີ11)ທລຍແຂວງຫຼວງນ້ຳທາໄດ້ຮັບປະນຸມັດໃຫ້ຈັດຕັ້ງປະຕິບັດໂຄງການຈຳນວນທັງໝົດ 16 ໂຄງການຊຶ່ງມີມູນຄ່າທັງໝົດ4.891.419.649ກີບ,ໃນນັ້ນທຶນປະກອບສ່ວນຂອງຊຸມຊົນມີມູນຄ່າ 330,151,760ກີບ,ທຶນຂອງ SDCມີ05ໂຄງການທຽບເທົ່າມູນຄ່າ 891.616.519ກີບ, ທຶນຂອງ IDA-MDTE+ ເຮເວີຕູ໊ດສົມທົບ 2 ໂຄງການໃນ11 ໂຄງການມູນຄ່າ 3.669.651.370ກີບ.

ໜ່ວຍງານປະສານງານໂຄງການຂັ້ນແຂວງ ເປັນໜ່ວຍງານໜຶ່ງທີ່ທຳໜ້າທີປະສານງານກັບບັນດາ 4 ຂະແໜງການຂັ້ນເມືອງ ແລະ ຂັ້ນແຂວງ ໂດຍເຮັດໜ້າທີ່ໃຫ້ການອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດກິດຈະກຳ ແລະ ວຽກງານໂຄງການເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານໄດ້ຖືກດຳເນີນໄປໄດ້ຢ່າງສະດວກ ແລະ ບັນລຸຕາມເປົ້າໝາຍໂຄງການທີ່ວາງໄວ້ ເຊິ່ງຫ້ອງການ ທລຍ ຂັ້ນແຂວງ ປະກອບດ້ວຍ 5 ໜ່ວຍງານທີ່ທຳໜ້າທີ່ດັ່ງກ່າວໄດ້ແກ່:

(1).ໜ່ວຍງານຕິດຕາມ-ປະເມີນຜົນ.
(2).ໜ່ວຍງານຈັດຊື້-ຈັດຈ້າງ.
(3).ໜ່ວຍງານພັດທະນາຊຸມຊົນ.
(4).ໜ່ວຍງານບໍລິຫານການເງິນ.
(5).ໜ່ວຍງານວິສະວະກອນ.

## 2. ສະພາບລວມຂອງການຈັດຕັ້ງປະຕິບັດໂຄງການໃນໜຶ່ງເດືອນຜ່ານມາ.

### 2.1 ຄວາມຄືບໜ້າດ້ານໂຄງການຍ່ອຍໃນຮອບວຽນ 10

ການຈັດຕັ້ງປະຕິບັດໂຄງການຍ່ອຍໃນສົກປີ2013-2014ໃນຈຳນວນໂຄງການທັງໝົດ 29 ໂຄງການ. ມາຮອດທ້າຍເດືອນມີນາ2014ບັນດາໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສຳເລັດແລ້ວ 100% ປະກອບມີ28 ໂຄງການ, ໂຄງການທີ່ສຳເລັດສູງກວ່າ>50% ມີ 0 ໂຄງການ,ໂຄງການທີ່ສຳເລັດຕ່ຳກວ່າ<50% ມີ1 ໂຄງການແລະ ໂຄງການທີ່ຍັງບໍ່ມີຄວາມຄືບໜ້າເທື່ອ 0% ມີ 0 ໂຄງການ.(ລາຍລະອຽດຕາຕະລາງຊ້ອນທ້າຍ)

**ຕາຕະລາງ 1: ຈຳນວນໂຄງການຍ່ອຍ ແລະ ງົບປະມານ ສົກປີ 2012-2013**

| ແຫຼ່ງທຶນ | ຈຳນວນໂຄງການຍ່ອຍ | ງົບປະມານ ( ກີບ ) |
|---|---|---|
| SDC-Water | 6 | 671.139.619 |
| GOL+ Helvetas | 18 | 2.820.370.404 |
| IDA | 5 | 876.202.546 |
| ຊຸມຊົນປະກອບສ່ວນ(ວັດຖຸ, ແຮງງານ) | | 607,963,408 |
| ລວມ: | 29 | 4.975.675.977 |

### 2.2. ຄວາມຄືບໜ້າດ້ານການເງິນ ຮອບວຽນ10(ຕາຕະລາງ 3 ການເຄືອນໄຫວທາງດ້ານການເງິນໃນເດືອນ)

| ລາຍການ | ຈຳນວນເງິນ | ໝາຍເຫດ |
|---|---|---|
| ເງິ ເຫຼືອຈາກເດືອ ກ່ອ | 169.324.675 | |
| ງົບປະມາ ແຂວງຂໍຈາກສູ ກາງ | 298.421.130 | |
| ງົບປະມາ ສູ ກາງໂອ ໃຫ້ | 228.293.661 | |
| ລວມຮັບທັງໝົດໃ ເດືອ | 397.618.336 | |
| ຈ່າຍຕົວຈິງທັງໝົດ | 178.252.600 | |
| ດຸ່□ດ່ຽງ | 219.365.736 | 5/5/2014 |

### 2.3. ຄວາມຄືບໜ້າດ້ານໂຄງການຍ່ອຍໃນຮອບວຽນ 11

ການຈັດຕັ້ງປະຕິບັດໂຄງການຍ່ອຍໃນສົກປີ2013-2014ໃນຈຳນວນໂຄງການທັງໝົດ16ໂຄງການ.ມາຮອດທ້າຍເດືອນມີນາ 2014 ມີບັນດາໂຄງການຍ່ອຍທີ່ຈັດຕັ້ງປະຕິບັດສຳເລັດແລ້ວ 100% ປະກອບມີ 00 ໂຄງການ, ໂຄງການທີ່ສຳເລັດສູງກວ່າ>50% ມີ 06ໂຄງການ,ໂຄງການທີ່ສຳເລັດຕ່ຳກວ່າ<50% ມີ 09 ໂຄງການແລະ ໂຄງການທີ່ຍັງບໍ່ມີຄວາມຄືບໜ້າເທື່ອ 0% ມີ 01 ໂຄງການ.

**ຕາຕະລາງ 2: ຈຳນວນໂຄງການຍ່ອຍ ແລະ ງົບປະມານ ສົກປີ 2013-2014**

| ແຫຼ່ງທຶນ | ຈຳນວນໂຄງການຍ່ອຍ | ງົບປະມານ ( ກີບ ) |
|---|---|---|
| SDC | 5 | 891.616.519 |
| IDA-MDTE +Helvetas | 11 | 3.669.651.370 |
| ທຶນປະຊາຊົນປະກອບສ່ວນ(ວັດຖຸ, ແຮງງານ) | | 330.151.760 |
| ລວມ: | 16 | 4.891.419.649 |

### 2.4. ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ.

- ວຽກງານການຄຸ້ມຄອງສິ່ງແວດລ້ອມ

ທຸກໆສະຖານທີການກໍ່ສ້າງຂອງໂຄງການເຊັ່ນ: ຫ້ອງານລະບົບນໍ້າລິນ, ອ່າງເກັບນໍ້າ, ລານກ໊ອກ, ຊົນລະປະທານ, ການຈັດສັນສະຖານທີໃນການລ້ຽງສັດ, ສະຖານທີ່ເດີນໂຮງຮຽນ ແລະ ອື່ນໆ, ທີມງານ ທລຍ ເມືອງໄດ້ລົງໄປຊຸກຍູ້ ແລະ ຕິດຕາມເຮັດໃຫ້ຊຸມຊົນມີຄວາມເຂັ້ມແຂງ ໃນການປົກປັກຮັກສາສິ່ງແວດລ້ອມນັບມື້ນັບດີຂຶ້ນເລື້ອຍໆ, ພ້ອມດຽວກັນນັ້ນກໍ່ໄດ້ສ້າງກົດລະບຽບພາຍໃນບ້ານ ກ່ຽວກັບການປົກປັກຮັກສາເຂດປ່າສະຫງວນ.

- ດ້ານສັງຄົມ

ສັງຄົມມີຄວາມຮັບຮູ້ເຂົ້າໃຈ ແລະ ສາມາດນໍາໄປຈັດຕັ້ງປະຕິບັດໄດ້ເຊັ່ນ:ບັນຫາການຄັດແຍງພາຍໃນບ້ານ ແລະ ກຸ່ມບ້ານກ່ຽວກັບດ້ານການປະກອບສ່ວນແຮງງານແລະວັດຖຸທ້ອງຖິ່ນ,ຜົນກະທົບທາງດ້ານການກໍ່ສ້າງໂຄງການຕ່າງໆພາຍໃນເມືອງມີຄວາມສະຫງົບ.

## 3. ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຂອງແຕ່ລະໜ່ວຍງານໃນເດືອນຜ່ານມາ

ໃນໜຶ່ງເດືອນຜ່ານມາກອງທຶນຫລຸດຜ່ອນຄວາມທຸກຍາກປະຈໍາແຂວງ ຫຼວງນໍ້າທາ ໄດ້ແບ່ງຄວາມຮັບຜິດຊອບຕາມວິຊາສະເພາະຂອງຕົນ ໄປຈັດຕັ້ງປະຕິບັດວຽກງານພາຍໃຕ້ການຊີ້ນໍາ ນໍາພາຂອງຄະນະຄຸ້ມຄອງໂຄງການ, ເຊິ່ງແຕ່ລະໜ່ວຍງານກໍ່ໄດ້ຕັ້ງໜ້າຈັດຕັ້ງປະຕິບັດວຽກງານ ຕາມການມອບໝາຍຢ່າງສຸດຄວາມສາມາດ ເຊິ່ງພໍສະຫລຸບໄດ້ດັ່ງນີ້:

### 3.1. ໜ່ວຍງານພັດທະນາຊຸມຊົນ.

3.1.1. ລະດົມການປະກອບສ່ວນຂອງຊຸມຊົນຕໍ່ກັບໂຄງການຍ່ອຍ

- ຮອບວຽນ 10 ຈໍານວນ 1 ໂຄງການໆກໍ່ສ້າງຂົວອູ່ສະແກນ ເມືອງນາແລ
- ຮອບວຽນ 11 ຈໍານວນທັງ 03 ເມືອງ 13ກຸ່ມບ້ານ 16 ໂຄງການ
- <u>ເມືອງນາແລ</u>:ໂຄງການກໍ່ສ້າງຂົວອູ່ພູຫຼວງ,ກໍ່ສ້າງໂຮງຮຽນລ້ອງມູນສິງໄຊ,ພູຈະແລ,ຕະເຄິງ,ຈັດສັນສະຖາທີ່ລ້ຽງສັດຜາຮູ,ໂຄງການກໍ່ສ້າງນໍ້າລິນກອນລາງ
- <u>ເມືອງ ລອງ</u>: ໂຄງການກໍ່ສ້າງຂົວອູ່ຈ່າປີ,ການກໍ່ສ້າງໂຮງຮຽນ ຈ່າຄໍາປີງ,ຜາງົ້ວ,ນໍ້າໂບ ແລະ ຕີນດອຍ.
- <u>ເມືອວຽງພູຄາ</u>:ໂຄງການທະລຸເສັ້ນທາງບ້ານ ນໍ້າລຸງ,ກໍ່ສ້າງຊົລະປະທານ ຕາສູມ,ດອນໃໝ່ ແລະ ຈັດສັນສະຖານທີ່ລ້ຽງສັດ ພູລັນໃຕ້,ນໍ້ານ້ອຍ+ນໍ້າປາມັນ.

3.1.2.ກອງປະຊຸມແຈ້ງຄືນແລະຝຶກອົບຮົມບ້ານທີ່ບໍ່ໄດ້ຮັບເມືອງນາແລໂຄງການຮອບວຽນ11ທັງ03ເມືອງ 13 ກຸ່ມບ້ານ

ລວມ 52 ບ້ານ, ໃນນັ້ນເມືອງລອງ26 ບ້ານ, ເມືອງ ນາແລ 16 ບ້ານ ແລະ ເມືອງວຽງພູຄາ: 10 ບ້ານ

3.1.3. ປັບປຸງກະດານຂາວ ແລະ ຕິດຂ່າວກຸ່ມບ້ານ 03ເມືອງ, 07 ກຸ່ມບ້ານ

- **ເມືອງນາແລ.**
  - ກຸ່ມບ້ານພູຈະແລ ຄັ້ງວັນທີ່ 22/04/2014
- **ເມືອງລອງ.**
  - ກຸ່ມບ້ານ ຈ່າໃໝ່ ຄັ້ງວັນທີ 21 /04/2014
  - ກຸ່ມບ້ານ ຈິງກາ ຄັ້ງວັນທີ27/04 /2014
  - ກຸ່ມບ້ານ ສີວິໄລ ຄັ້ງວັນທີ29/04/2014
- **ເມືອງ ວຽງພູຄາ**
  - ກຸ່ມບ້ານນໍ້າສີງ ຄັ້ງວັນທີ່ 03/04/2014
  - ກຸ່ມບ້ານ ປາກຄານ ຄັ້ງວັນທີ່ 22/4/2014
  - ກຸ່ມບ້ານນໍ້າແພ ຄັ້ງວັນທີ່ 25/4/2014

3.1.4.ຕິດຕາມກ່ອງສະແດງຄວາມຄິດຄໍາເຫັນຢູ່ບ້ານແລະກຸ່ມບ້ານໃນ 03 ເມືອງ 58 ກ່ອງລາຍລະອຽດຕາມລຸ່ມນີ້:

- ເມືອງນາແລ ເປີດກ່ອງຄໍາຄິດເຫັນຈໍານວນ 17 ກ່ອງ

| ລ/ດ | ຊື່ບ້ານຫຼືກຸ່ມບ້ານ | ວັນ,ເດືອນ,ປີ | ຈ/ນຄຳເຫັນ | ຈ/ນຄົນເຂົ້າຮ່ວມ | | ຊື່ຜູ້ເປີດ |
|---|---|---|---|---|---|---|
| | | | | ລວມ | ຍິງ | |
| 1 | ເຜີ້ງ | 2/4/2014 | 1 | 5 | 1 | ແພງສີ |
| 2 | ຜາຣູ | 1/4/2014 | 0 | 13 | 4 | ແພງສີ |
| 3 | ພູຈະແລ | 4/4/2014 | 0 | 23 | 11 | ແພງສີ |
| 4 | ລ້ອງມູນສີງໄຊ | 4/4/2014 | 0 | 14 | 6 | ໂອລິດ |
| 5 | ລ້ອງມູນຈອມແກ້ວ | 5/4/2014 | 0 | 22 | 8 | ໂອລິດ |
| 6 | ພູຕີນ | 6/4/2014 | 0 | 19 | 7 | ໂອລິດ |
| 7 | ສະແກນ | 8/4/2014 | 0 | 9 | 3 | ໂອລິດ |
| 8 | ພູຕາງ | 5/4/2014 | 1 | 23 | 11 | ແພງສີ |
| 9 | ແວນ | 6/4/2014 | 0 | 14 | 5 | ແພງສີ |
| 10 | ຜາງບົກ | 3/4/2014 | 1 | 26 | 11 | ແພງສີ |
| 11 | ກອນລາງ | 7/4/2014 | 0 | 19 | 7 | ແພງສີ |
| 12 | ກັນທະ | 8/4/2014 | 0 | 10 | 6 | ແພງສີ |
| 13 | ຫາດຈະລະ | 9/4/2014 | 0 | 13 | 8 | ໂອລິດ |
| 14 | ສາງອາກ | 9/4/2014 | 0 | 16 | 8 | ແພງສີ |
| 15 | ພູລອງ | 10/4/2014 | 0 | 24 | 10 | ແພງສີ |
| 16 | ໜອງປາແສດ | 11/4/2014 | 1 | 31 | 17 | ແພງສີ |
| 17 | ຫາດນາແລ້ງ | 10/4/2014 | 1 | 25 | 16 | ໂອລິດ |
| ລວມ | | | 5 | 306 | 139 | |

➢ ຜ່ານການເປີດກ່ອງຮັບຄຳຄິດເຫັນຢູ່ບັນດາບ້ານຂອງຄະນະກຳມະການຂັ້ນບ້ານປະກົດວ່າໄດ້ຮັບຄຳເຫັນທີ່ສະແດງອອກມີດັ່ງລຸ່ມນີ້:

1.ບ້ານເຜີ້ງ ສະເໜີໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແກ້ໄຂທຶນທີ່ ຊາວບ້ານຢືມມາສ້າງເສັ້ນທາງຫາພື້ນທີ່ຈັດສັນບ່ອນລ້ຽງສັດ ທີ່ ທລຍ ສະຫນັບສະຫນູນໃນຮອບວຽນ 9

2.ບ້ານຫາດນາແລ້ງ ສະເໜີໃຫ້ ທລຍ ປະສານຫາທາງບໍລິສັດໃນການສ້ອມແປງໂຮງຮຽນ ບ່ອນທີ່ເປ່ເພ

3.ບ້ານໜອງປາແສດ ສະເໜີໃຫ້ ທລຍ ຊ່ວຍທຶນສ້ອມແປງທາງເຂົ້າບ້ານ

4.ບ້ານຜາງບົກ ສະເໜີໃຫ້ ທລຍ ຊ່ວຍທະລຸເສັ້ນທາງສູ່ເຂດທຳການຜະລິດ ແລະໄປຫາແຂວງອຸດົມໄຊ

5.ບ້ານ ພູຕາງ ສະເໜີໃຫ້ຫ້ອງການ ທລຍ ຊ່ອຍແກ້ໄຂ ລະບົບນ້ຳລິນ.

- ເມືອງລອງ ເປີດກ່ອງຄຳຄິດເຫັນຈຳນວນ 27 ກ່ອງ

| ລ /ດ | ຊື່ບ້ານຫຼືກຸ່ມບ້ານ | ວັນ,ເດືອນ,ປີ | ຈຳນວນຄຳເຫັນ | ຈຳນວນຄົນເຂົ້າຮ່ວມ | | ຊື່ຜູ້ເປີດ |
|---|---|---|---|---|---|---|
| | | | | ລວມ | ຍິງ | |
| 1 | ບ້ານ ຜາແຕ | 1/4/2014 | 0 | 9 | 2 | ທ.ຂີງຄຳ+ສໍລະພົງ |
| 2 | ບ້ານ ພໍຈັນ | 2/4/2014 | 0 | 5 | 1 | ທ.ຂີງຄຳ+ສໍລະພົງ |
| 3 | ບ້ານ ສີວິໄລ | 2/4/2014 | 0 | 10 | 3 | ທ. ວັນສຸກ |
| 4 | ບ້ານ ຈ່າຄຳຕັນ | 3/4/2014 | 0 | 6 | 1 | ທ.ຂີງຄຳ+ສໍລະພົງ |
| 5 | ບ້ານ ຈ່າຄຳປີງ | 3/4/2014 | 0 | 8 | 3 | ທ. ວັນສຸກ |
| 6 | ບ້ານ ແດນກາງ | 4/4/2014 | 0 | 5 | 1 | ທ.ຂີງຄຳ+ສໍລະພົງ |
| 7 | ບ້ານ ຫ້ວຍໝໍ້ | 4/4/2014 | 0 | 10 | 2 | ທ. ວັນສຸກ+ຄຳແສງ |
| 8 | ບ້ານ ທົ່ງໝໍ້ຕຳ | 5/4/2014 | 0 | 5 | 1 | ທ.ຂີງຄຳ |
| 9 | ບ້ານ ສາມເມືອງ | 5/4/2014 | 0 | 9 | 2 | ທ. ວັນສຸກ |
| 10 | ບ້ານ ພະຍາຫຼວງບໍ | 5/4/2014 | 0 | 10 | 2 | ທ. ສໍລະພົງ |

| | | | | | | |
|---|---|---|---|---|---|---|
| 11 | ບ້ານ ປ່າຊອດ | 6/4/2014 | 0 | 6 | 2 | ທ. ຂີງຄໍາ |
| 12 | ບ້ານ ບໍ່ | 6/4/2014 | 0 | 5 | 1 | ທ. ສໍລະພີງ |
| 13 | ບ້ານ ເຈຕາ | 7/4/2014 | 0 | 10 | 3 | ທ.ຂີງຄໍາ |
| 14 | ບ້ານ ສົມປານໃໝ່ | 21/42014 | 0 | 6 | 1 | ທ.ຂີງຄໍາ |
| 15 | ບ້ານ ຈີງກາ | 21/42014 | 0 | 7 | 2 | ທ. ສໍລະພີງ |
| 16 | ບ້ານ ຈ່ຄໍາລີ | 22/4/2014 | 0 | 10 | 3 | ທ.ຂີງຄໍາ |
| 17 | ບ້ານ ນໍ້າຣີ | 22/4/2014 | 0 | 8 | 2 | ທ. ສໍລະພີງ |
| 18 | ບ້ານ ພະຍາຫຼວງຄໍາປີງ | 23/4/2014 | 0 | 9 | 2 | ທ.ຂີງຄໍາ |
| 19 | ບ້ານ ປ່າກວ້ຍ | 23/4/2014 | 0 | 8 | 3 | ທ. ສໍລະພີງ |
| 20 | ບ້ານ ຈ່າອາດ | 24/4/2014 | 0 | 7 | 1 | ທ.ຂີງຄໍາ |
| 21 | ບ້ານ ດອນໃຈ | 24/4/2014 | 0 | 5 | 0 | ທ.ຂີງຄໍາ |
| 22 | ບ້ານ ຜາຄໍາ | 25/4/2014 | 0 | 6 | 2 | ທ.ຂີງຄໍາ |
| 23 | ບ້ານ ສົມປານເກົ່າ | 26/4/2014 | 0 | 4 | 0 | ທ.ຂີງຄໍາ |
| 24 | ບ້ານ ແມໂຂງ | 27/4/2014 | 0 | 5 | 1 | ທ.ຂີງຄໍາ |
| 25 | ບ້ານ ຈ່າປີ | 6/4/2014 | 0 | 7 | 1 | ທ. ສໍລະພີງ |
| 26 | ບ້ານ ຜ່ານງົວ | 22/4/2014 | 0 | 9 | 2 | ທ.ຂີງຄໍາ |
| 27 | ບ້ານ ນໍ້າໂບ | 21/42014 | 0 | 7 | 1 | ທ. ສໍລະພີງ |
| ລວມ | | | 00 | 196 | 45 | |

➢ ຜ່ານການເປີດກ່ອງຮັບຄໍາຄິດເຫັນຢູ່ບັນດາບ້ານຂອງຄະນະກໍາມະການຂັ້ນບ້ານປະກົດວ່າບໍ່ມີຄໍາເຫັນໃດທີ່ສະແດງອອກ

- ເມືອງວຽງພູຄາ :ເປີດກ່ອງຄໍາຄິດເຫັນຈໍານວນ 14 ກ່ອງ

| ລ /ດ | ຊື່ບ້ານຫຼືກຸ່ມບ້ານ | ວັນ,ເດືອນ,ປີ | ຈໍານວນຄໍາເຫັນ | ຈໍານວນຄົນເຂົ້າຮ່ວມ | | ຊື່ຜູ້ເປີດ |
|---|---|---|---|---|---|---|
| | | | | ລວມ | ຍີງ | |
| 1 | ບ້ານ ນໍ້າແພ | 1/4/2014 | 0 | 07 | 03 | ນ. ແກ້ວສົມພອນ |
| 2 | ບ້ານ ນໍ້າຂອງນ້ອຍ | 2/4/2014 | 0 | 11 | 06 | ນ. ແກ້ວສົມພອນ |
| 3 | ບ້ານ ນໍ້າແອງ | 3/4/2014 | 0 | 09 | 02 | ທ. ອັນທາ |
| 4 | ບ້ານ ນໍ້າລຸງ | 4/4/2014 | 0 | 04 | 02 | ນ. ແກ້ວສົມພອນ |
| 5 | ບ້ານ ຕາລອງ | 4/4/2014 | 0 | 09 | 03 | ນ. ແກ້ວສົມພອນ |
| 6 | ບ້ານ ພູລັນເໜືອ | 7/4/2014 | 0 | 07 | 02 | ນ. ແກ້ວສົມພອນ |
| 7 | ບ້ານ ນໍ້າວາງ | 8/4/2014 | 0 | 08 | 02 | ນ. ແກ້ວສົມພອນ |
| 8 | ບ້ານ ນໍ້າຈີລີ | 9/4/2014 | 0 | 07 | 02 | ນ. ມະລີ |
| 9 | ບ້ານ ປລາງ | 10/4/2014 | 0 | 10 | 04 | ນ. ແກ້ວສົມພອນ |
| 10 | ບ້ານ ນໍ້ານ້ອຍປາມັນ | 22/4/2014 | 0 | 05 | 04 | ນ. ແກ້ວສົມພອນ |
| 11 | ບ້ານ ປາກຄານ | 23/4/2014 | 0 | 12 | 04 | ທ. ອັນທາ |
| 12 | ບ້ານ ຕາສູມ | 23/4/2014 | 0 | 06 | 01 | ທ. ອັນທາ |
| 13 | ບ້ານ ພູລັນໃຕ້ | 24/4/2014 | 1 | 10 | 05 | ນ.ແກ້ວສົມພອນ |
| 14 | ບ້ານ ດອນໃໝ່ | 24/42014 | 0 | 09 | 03 | ທ. ອັນທາ |
| ລວມ | | | 01 | 114 | 43 | |

➢ ຜ່ານການເປີດກ່ອງຮັບຄໍາຄິດເຫັນຢູ່ບັນດາບ້ານຂອງຄະນະກໍາມະການຂັ້ນບ້ານໄດ້ຮັບ01 ຄໍາເຫັນສະແດງອອກເຊັ່ນ

1. ສະເໜີໃຫ້ຮ້ານຈັດສິ່ງວັດສະດຸດ່ວນເພາະວ່າຮອດລະດູທຳການຜະລິດແລ້ວ ( ບ້ານ ພູລັນໃຕ້)

3.1.5.ວຽກງານຂຽນຂ່າວທັງ 2 ເມືອງໄດ້04 ຂ່າວ,ໃນນັ້ນເມືອງ ນາແລ ໄດ້ 02 ຂ່າວ, ເມືອງວຽງພູຄາໄດ 02 ຂ່າວ

## 3.2.ໜ່ວຍງານຈັດຊື້-ຈັດຈ້າງ.

3.2.1.ຕິດຕາມແລະຄຸ້ມຄອງສັນຍາໂຄງການຍ່ອຍໃນຮອບວຽນ 10 ແລະ 11 (03 ເມືອງ 3ໂຄງການ)

- ຮອບວຽນ 10
  -ໂຄງການກໍ່ສ້າງຂົວອູ່ສະແກນ ເມືອງນາແລ
- ຮອບວຽນ 11
  -ໂຄງການກໍ່ສ້າງຂົວອູ່ພູຫຼວງ ເມືອງນາແລ
  -ໂຄງການກໍ່ສ້າງຂົວອູ່ຈ່າປີ ເມືອງລອງ

3.2.2. ກອງປະຊຸມເຊັນສັນຍາການກໍ່ສ້າງລະຫວ່າງຊຸມຊົນກັບຜູ້ຮັບເໝົາ ທັງ03ເມືອງ ໄດ້ 14 ໂຄງການ,ໃນນັ້ນ.

- ເມືອງນາແລ. 05 ໂຄງການ.
  -ໂຄງການກໍ່ສ້າງ ໂຮງຮຽນປະຖົມບ້ານພູຈະແລ.
  -ໂຄງການກໍ່ສ້າງໂຮງຮຽນປະຖົມບ້ານຕະເຄິງ.
  -ໂຄງການກໍ່ສ້າງໂຮງຮຽນປະຖົມບ້ານລ້ອງມູນສິງໄຊ.
  -ໂຄງການກໍ່ສ້າງນ້ຳລິນບ້ານກອນລາງ.
  -ໂຄງການກໍ່ສ້າງຈັດສັນສະຖານທີ່ລ້ຽງສັດບ້ານຜາຮູ.
- ເມືອງລອງ. 04 ໂຄງການ
  -ໂຄງການກໍ່ສ້າງ ໂຮງຮຽນປະຖົມບ້ານຈ່າຄຳປິງ
  -ໂຄງການກໍ່ສ້າງ ໂຮງຮຽນປະຖົມບ້ານນ້ຳໂບ.
  -ໂຄງການກໍ່ສ້າງ ໂຮງຮຽນປະຖົມບ້ານຜາງິ້ວ (ອ້າຍແສງ)
  -ໂຄງການກໍ່ສ້າງໂຮງຮຽນປະຖົມບ້ານຕີນດອຍ
- ເມືອງວຽງພູຄາ 05 ໂຄງການ
  -ໂຄງການທຸລຸເສັ້ນທາງບ້ານນ້ຳລຸງ
  -ໂຄງການກໍ່ສ້າງຊົນລະປະທານບ້ານດອນໃໝ່
  -ໂຄງການກໍ່ສ້າງຊົນລະປະທານບ້ານຕາສຸມ
  -ໂຄງການຈັດສັນສະຖານທີ່ລ້ຽງສັດບ້ານພູລັນໃຕ້
  -ໂຄງການຈັດສັນສະຖານທີ່ລ້ຽງສັດບ້ານນ້ຳນ້ອຍ+ນ້ຳປາມັນ

## 3.3. ໜ່ວຍງານບໍລິຫານການເງິນ.

3.3.1. ທັງສາມເມືອງຫຼູບບໍລິຫານຫ້ອງການປະຈຳເດືອນ 04/2014ຂຶ້ນແຜນປະຈຳເດືອນ 05/2014

3.3.2.ທັງສາມເມືອງສະຫຼູບເງິນຕິດຕາມກິດຈະກຳ 04/2014 ຂຶ້ນແຜນເດືອນ 05/2014

3.3.3. ເມືອງນາແລ ກະກຽມເອກະສານຂໍເງິນ ງວດ1 ໂຄງການຮອບວຽນ11ຈຳນວນ5ໂຄງການ

3.3.4. ເມືອງ ວຽງພູຄາ ສັບຊ້ອນເອກະສານຕ່າງໆທີ່ຍັງປົນເປກັນ.

## 3.4. ໜ່ວຍງານວິສະວະກຳ.

3.4.1.ຕິດຕາມຄວາມຄືບໜ້າຂອງການກໍ່ສ້າງໃນ 03 ເມືອງ,ວຽງພູຄາ,ລອງ ແລະນາແລ.(ຮອບວຽນ10 ແລະ11)

- ຮອບວຽນ10
- ເມືອງນາແລ

| ລ/ດ | ຊື່ໂຄງການ | ບ້ານ | ກຸ່ມບ້ານ | ຄັ້ງຕິດຕາມ | ວັນທີ | ເປີເຊັນຄວາມຄືບໜ້າ | |
|---|---|---|---|---|---|---|---|
| | | | | | | ເດືອນແລ້ວ | ເດືອນນີ້ |
| 1 | ກໍ່ສ້າງຂົວອູ່ | ສະແກນ | ສະແກນ | 01 | | 41% | 41% |

❖ ໝາຍເຫດ : ລໍຖ້າສິ້ນສ່ວນວັດສະດຸ (ສາຍກາບ ແລະເຫຼັກເສັ້ນຕ່າງໆ)

- ຮອບວຽນ 11
- ເມືອງ ນາແລ

| ລ/ດ | ຊື່ໂຄງການ | ບ້ານ | ກຸ່ມບ້ານ | ຄັ້ງ ຕິດຕາມ | ວັນທີ | ເປີເຊັນຄວາມຄືບໜ້າ | |
|---|---|---|---|---|---|---|---|
| | | | | | | ເດືອນແລ້ວ | ເດືອນນີ້ |
| 1 | ກໍ່ສ້າງຂົວອູ່ | ພູຫຼວງ | ພູຫຼວງ | 01 | | 55% | 55.% |
| 2 | ກໍ່ສ້າງໂຮງຮຽນ | ພູຈະແລ | ພູຈະແລ | | | | 15% |
| 3 | ຈັດສັນບ່ອນລ້ຽງສັດ | ຜາຮູ | ພູຈະແລ | | | | 50% |
| 4 | ກໍ່ສ້າງໂຮງຮຽນ | ລ້ອງມູນສີງໄຊ | ລ້ອງມູນ | | | | 5% |
| 5 | ກໍ່ສ້າງນ້ຳລີນ | ກອນລາງ | ສະແກນ | | | | 50% |
| 6 | ກໍ່ສ້າງໂຮງຮຽນ | ຕະເຄິງ | ຕະເຄິງ | | | | 30% |

❖ ໝາຍເຫດ : ລໍຖ້າສິ້ນສ່ວນວັດສະດຸ (ສາຍກາບ ແລະເຫຼັກເສັ້ນຕ່າງໆ)

- ເມືອງ ລອງ

| ລ/ດ | ຊື່ໂຄງການ | ບ້ານ | ກຸ່ມບ້ານ | ຄັ້ງ ຕິດຕາມ | ວັນທີ | ເປີເຊັນຄວາມຄືບໜ້າ | | ຜູ້ເຂົ້າຮ່ວມ |
|---|---|---|---|---|---|---|---|---|
| | | | | | | ເດືອນແລ້ວ | ເດືອນນີ້ | |
| 1 | ກໍ່ສ້າງຂົວອູ່ | ຈ່າປີ | ຈ່າໃໝ່ | 02 | 18,22/3/14 | 42% | 42% | 02 |
| 2 | ກໍ່ສ້າງຮ/ຮ | ຈ່າຄຳປີງ | ສີວິໄລ | 01 | 20/4/014 | 0 | 15% | 02 |
| 3 | ກໍ່ສ້າງຮ/ຮ | ນ້ຳໂບ | ຈິງກາ | 03 | 2,22,30/4/14 | 0 | 20% | 02 |
| 4 | ກໍ່ສ້າງຮ/ຮ | ຕີນດອຍ | ສະ | 01 | 3/4/014 | 0 | 50% | 02 |
| 5 | ກໍ່ສ້າງຮ/ຮ | ຜາງົ້ວ | ສົມປານ | 01 | 25/4/014 | 0 | 15% | 02 |

- ເມືອງ ວຽງພູຄາ

| ລ/ດ | ຊື່ໂຄງການ | ບ້ານ | ກຸ່ມບ້ານ | ຄັ້ງຕິດຕາມ | ວັນທີ | ເປີເຊັນຄວາມຄືບໜ້າ | |
|---|---|---|---|---|---|---|---|
| | | | | | | ເດືອນແລ້ວ | ເດືອນນີ້ |
| 1 | ທະລຸເສັ້ນທາງ | ນ້ຳລຸງ | ນ້ຳສີງ | 01 | | 0% | 30% |
| 2 | ກໍ່ສ້າງຊົລະປະທານ | ຕາສູມ | ປາກຄານ | 01 | | 0 | 30% |
| 3 | ຈັດສັນອນລ້ຽງສັດ | ນ້ຳນ້ອຍ | ປາກຄານ | 01 | | 0 | 50% |
| 4 | ກໍ່ສ້າງຊົລະປະທານ | ດອນໃໝ່ | ນ້ຳແພ | 01 | | 0 | 0% |

| | | | | | | | |
|---|---|---|---|---|---|---|---|
| 5 | ຈັດສັນອນລ້ຽງສັດ | ພູລັນໃຕ້ | ນໍ້າແພ | 01 | | 0 | 80% |

3.4.2. ຕິດຕາມການກໍ່ສ້າງຮ່ວມກັບເຮວເວີຕັດວິຊາການສູນກາງ ໂຄງການກໍ່ສ້າງຂົວອູ່ 3 ແຫ່ງ.

## 3.5. ໜ່ວຍງານຕິດຕາມ - ປະເມີນຜົນ.

- ຕິດຕາມໂຄງການຍ່ອຍຮອບວຽນ 10 ແລະ 11 ຢູ່ 3 ເມືອງ.
- ຕື່ມຂໍ້ມູນໃສ່ Formete ທີ່ສູນກາງກຳນົດໃຫ້.
- ສືບຕໍ່ຕື່ມຂໍ້ມູນເຂົ້າລະບົບຖານຂໍ້ມູນ.
- ລາຍງານຄວາມຄືບໜ້າຢ່າງເປັນປົກກະຕິ.
- ສັງລວມບົດລາຍງານປະຈຳເດືອນ

## 3.6. ວຽກງານອື່ນໆທີ່ໄດ້ເຮັດ

- ກອງປະຊຸມວຽກງານວຽກງານວິງານວິຊາການກັບຂະແໜງການທີ່ກ່ຽວຂ້ອງ
- ເມືອງວຽງພູຄາ ກະກຽມການຖ່າຍທຳຈາກທີມງານສູນກາງ 02ໂຄງການ, ໂຄງການກໍ່ສ້າງນໍ້າລິນ ແລະໂຄງການສ້ອມແປງໂຮງຮຽນ 2ຫ້ອງ

# 4. ຂໍ້ສັງເກດ

## 4.1 ຈຸດດີ

- ໄດ້ຮັບການຊີ້ນຳ ແລະກະຕຸກຊຸກຍູ້ ຢ່າງໃກ້ສິດຕິດແທດຈາກ ທລຍຂັ້ນສູນກາງ ແລະ ແຂວງ.
- ພະນັກງານທຸກຄົນໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຂອງຕົນຢ່າງສຸດຄວາມສາມາດ.
- ອຳນາດການປົກຄອງທ່ອງຖິ່ນໃຫ້ຄວາມສຳຄັນຕໍ່ກັບວຽກງານຂອງທລຍ.
- ການນຳຂັ້ນແຂວງ,ເມືອງ,ຂະແໜງການຕ່າງໆຕະຫຼອດຮອດກຸ່ມບ້ານ ແລະບ້ານໄດ້ໃຫ້ການຊີ້ນຳ ແລະຊ່ວຍເຫຼືອເປັນຢ່າງດີ

## 4.2 ຂໍ້ຄົງຄ້າງ

- ການສະໜອງວັດສະດຸມີຄວາມຊັກຊ້າເຮັດໃຫ້ການກໍ່ສ້າງໂຄງການຈຳນວນໜຶ່ງມີຄວາມຊັກຊ້າໄປນຳເຊັ່ນໂຄງການກໍ່ສ້າງຂົວອູ່ ສະແກນ ແລະ ພູຫຼວງ ເມືອງນາແລ.
- ການດຳເນີນໂຄງການຮອບວຽນ 11 ມີບາງບໍລິສັດຍັງຖືເບົາໃນການລົງມືຈັດຕັ້ງປະຕິບັດໂຄງການ
- ການຈັດຕັ້ງປະຕິບັດບາງກິດຈະກຳຊັກຊ້າເຮັດໃຫ້ວຽກທີ່ເຂົ້າມາໃໝ່ຊັກຊ້າໄປຕາມໆກັນ.

## 4.3 ວິທີທາງແກ້ໄຂ

- ເພີ່ມຄວາມເອົາໃຈໃສ່ຕໍ່ທຸກໜ້າວຽກ ແລະ ຊຸກຍູ້ຕໍ່ກັບໂຄງການກໍ່ສ້າງຕ່າງໆ ທີ່ຈັດຕັ້ງປະຕິບັດຢູ່ບັນດາບ້ານແລະກຸ່ມບ້ານ
- ແນະນຳທີມງານຈັດຕັ້ງປະຕິບັດຂັ້ນບ້ານເຮັດໃບແຈ້ງໃຫ້ບໍລິສັດລົງມືຈັດຕັ້ງປະຕິບັດໂຄງການດັ່ງກ່າວ
- ແຕ່ລະໜ່ວຍງານຕ້ອງວາງແຜນໃຫ້ລະອຽດໃນການຈັດຕັ້ງປະຕິບັດ.

## 4.4 ບົດຮຽນຖອດຖອນໄດ້

- ການປະສານງານ ແລະ ວາງແຜນຮ່ວມກັນ ເປັນຂອດຕັດສິນຄວາມສຳເລັດຂອງບັນດາໜ້າວຽກຕ່າງໆແລະເຮັດໃຫ້ມີຜົນສຳເລັດໄວຂຶ້ນ.
- ການແນະນຳແລະໃຫ້ການໃກ້ຊິດຕິດແທດຂອງ ທລຍ ຂັ້ນແຂວງເປັນແນວທາງປຸງລະດົມໃຫ້ອ້າຍນ້ອງຂັ້ນເມືອງມີຄວາມກະຕືລືລົ້ນ

## 4.5 .ຂໍ້ສະເໜີ.

- ສະເໜີໃຫ້ ໜ່ວຍງານບໍລິຫານການເງິນແຂວງຊ່ວຍທວງເງິນຮ່ວງຂອງລັດຖະບານ
- ເມືອງ ນາແລ ສະເໜີໃຫ້ແຂວງຊ່ວຍປະສານເລື່ອງງົບປະມານກໍ່ສ້າງ ຫ້ອງ ຈ້ຂອງ ທລຍ ເມືອງ

## 5.ແຜນວຽກໃນຕໍ່ໜ້າ(ເດືອນ5/2014)

### 5.1.ວຽກບໍລິຫານການເງິນ

- ນໍາພາທີມງານຂັ້ນກຸ່ມ ແລະບ້ານສະຫຼຸບເງິນງວດ 2 ຮອບວຽ10ໂຄງການກໍ່ສ້າງເສັ້ນທາງບ້ານນໍ້າວາງ ແລະ ງວດ 3 ຮອບວຽນ9,ໂຄງການກໍ່ສ້າງເສັ້ນທາງ  ບ້ານທົ່ງໄຊ່ ແລະ ບ້ານນໍ້າມາງ ເມືອງວຽງພູຄາ.
- ອໍານວຍຄວາມສະດວກໃຫ້ທີມງານຂັ້ນກຸ່ມ ແລະ ບ້ານສະຫຼຸບເງິນງວດ1 ແລະຂໍເງິນງວດ 2 ຮອບວຽນ 11.
- ເມືອງ ນາແລ ກະກຽມໃຫ້ທີມງານກຸ່ມບ້ານໂອນເງິນໂຄງການຍ່ອຍຮອບວຽນ10ຮ່ວງທຶນສົມທົບລັດຖະບານ ໃຫ້ຜູ້ຮັບເໝົາຈໍານວນ 06 ໂຄງການ
- ສະຫຼຸບບໍລິຫານຫ້ອງການປະຈໍາເດືອນ 5/2014ແລະ ຂື້ນແຜນເດືອນ 6/2014
- ສະຫຼຸບເງິນຕິດຕາມກິດຈະກໍາ 5/2014 ຂື້ນແຜນເດືອນ 6/2014

### 5.2.ວຽກງານຈັດຊື້

- ຕິດຕາມສັນຍາການກໍ່ສ້າງໂຄງການຍ່ອຍຮອບວຽນ10 ແລະ 11 ທັງ 03 ເມືອງ
- ກວດກາວັດສະດຸພາກສະໜາມໂຄງການຮອບວຽນ11 ທັງ03ເມືອງ,ເມືອງລອງ,ນາແລ ແລະ ວຽງພູຄາ

### 5.3. ວຽກຊຸມຊົນ

- ທັງ03ເມືອງລະດົມການປະກອບສ່ວນຂອງຊຸມຊົນເຂົ້າໃນໂຄງການກໍ່ສ້າງຮອບວຽນ10 ແລະ 11
- ທັງ 03ເມືອງກະກຽມຈັດກອງປະຊຸມຢ້ຽມຢາມກຸ່ມບ້ານ.
- ທັງ 03 ເມືອງ ກະກຽມຈັດກອງປະຊຸມປະຈໍາເດືອນສໍາລັບຜູ້ປະສານງານ.
- ເມືອງນາແລ ກະກຽມ ລົງກວດເອກະສານ ແລະ ຄວາມພ້ອມຂອງບ້ານທີ່ໄດ້ຮັບໂຄງການແຕ່ຮອບວຽນ 9-11

- ເມືອງລອງ ສືບຕໍ່ລົງຈັດກອງປະຊຸມແຈ້ງຜົນຄືບ ແລະ ຝຶກອົບຮົມວຽກງານ ກສກ ບ້ານທີ່ບໍ່ທັນສຳເລັດ.
- ຕິດຕາມກະດານຂາວກຸ່ມບ້ານ ແລະກ່ອງສະແດງຄວາມຄິດຄຳເຫັນຢູ່ແຕ່ລະບ້ານ
- ຂຽນຂ່າວການເຄື່ອນໄຫວວຽກງານຕ່າງໆ.

5.4. ວຽກວິສະວະກຳ

- ເມືອງນາແລ ຕິດຕາມການຈັດສິ່ງວັດສະດຸພາກສະໜາມ ບາງໂຄງການ.
- ຕິດຕາມຄວາມຄືບໜ້າຂອງກໍ່ສ້າງໂຄງການຍ່ອຍຂອງຮອບວຽນ10 ແລະ 11 ທັງ3ເມືອງ.
- ລົງກວດກາການກໍ່ສ້າງ 40 % ບາງໂຄງການ.

5.5. **ໜ່ວຍງານຕິດຕາມ -ປະເມີນຜົນ.**

- ເຂົ້າຮ່ວມຕິດຕາມການກໍ່ສ້າງໂຄງການຮອບວຽນ 10 ແລະ 11
- ຕື່ມຂໍ້ມູນໃສ່ Formete ທີ່ສູນກາງກຳນົດໃຫ້.
- ສືບຕໍ່ຕື່ມຂໍ້ມູນເຂົ້າລະບົບຖານຂໍ້ມູນ.
- ລາຍງານຄວາມຄືບໜ້າຢ່າງເປັນປົກກະຕິ
- ສັງລວມລາຍງານປະຈຳເດືອນເປັນປົກກະຕິ

ຜູ້ປະສານງານແຂວງ

ກອງທຶນຫຼຸດຜ່ອນຄວາມທຸກຍາກ

ວົງມະນີ ເພຍເທບ
Vongmany PHIATHEP

ສັງລວມໂດຍຕິດຕາມປະເມີນຜົນແຂວງ

ຈູ່ນ ແກ້ວ